

# ຮັບສະໝັກ ເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ ສູ່ຄວາມສຳເລັດກັບພວກເຮົາ

## 1. ວິຊາການ ພັດທະນາໂປຼແກຼມ (Programmer Officer) ສູນໄອທີ

### ໜ້າທີ່ຮັບຜິດຊອບຫຼັກ

1. ພັດທະນາ ແລະ ຄຸ້ມຄອງໂປຼແກຼມຮັບໃຊ້ພາຍໃນ ແລະ ພາຍນອກ ທຄຕລ ຕາມການແບ່ງຄວາມຮັບຜິດຊອບ;
2. ສ້າງ ແລະ ປະຕິບັດແຜນທົດສອບລະບົບ (System Testing Plan);
3. ຊ່ວຍເຫຼືອລູກຄ້າ ແລະ ພະນັກງານໃນການນຳໃຊ້ຜະລິດຕະພັນ E-Banking (Tier-2 Support);
4. ພັດທະນາລະບົບ Bill payment Controller ແລະ Monitor Bill payment;
5. ພັດທະນາລະບົບ Service Bill payment ເຊື່ອມຕໍ່ລະບົບ Core Banking, BCEL one, I-Bank;
6. ພັດທະນາ, ຕິດຕາມ ແລະ ແກ້ໄຂບັນຫາລະບົບ ເພື່ອຮອງຮັບການສ້າງຜະລິດຕະພັນ ແລະ ການບໍລິການໃໝ່ໆ;
7. ກວດສອບ ແລະ ທົດລອງຜະລິດຕະພັນກ່ອນຈະມີການເປີດການນຳໃຊ້;
8. ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

### ມາດຖານ ແລະ ເງື່ອນໄຂຂອງຜູ້ສະໝັກ

1. ເພດ: **ຊາຍ/ຍິງ**, ອາຍຸ **21- 35** ປີ (ເກີດລະຫວ່າງປີ **1991** ຫາ **2005**);
2. ລະດັບການສຶກສາ: **ຮຽນຈົບຊັ້ນສູງຂຶ້ນໄປ** ໃນສາຂາວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ, ການພັດທະນາໂປຼແກຼມຄອມພິວເຕີ, ການພັດທະນາເວັບໄຊ, ວິສະວະກຳຄອມພິວເຕີ ແລະ ສາຂາອື່ນໆທີ່ກ່ຽວຂ້ອງກັບໄອທີ;
3. ຄະແນນສະເລ່ຍຮຽນຈົບພາຍປະເທດ **CGPA 2,70/4,00 ຫຼື 6,75/10** ຂຶ້ນໄປ ຫຼື ທຽບເທົ່າ, ຄະແນນສະເລ່ຍຮຽນຈົບຕ່າງປະເທດ **CGPA 2,50/4,00 ຫຼື 6/10** ຂຶ້ນໄປ ຫຼື ທຽບເທົ່າ;
4. ມີຄວາມຮູ້ໃນພາສາໂປຼແກມໃດໜຶ່ງເຊັ່ນ: Java, JavaScript, Vue.js, Svelte, Python, Go, Rust;
5. ຮູ້ນຳໃຊ້ຖານຂໍ້ມູນໃດໜຶ່ງເຊັ່ນ: Oracle, MariaDB, MySQL, PostgreSQL;
6. ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ).



# ຮັບສະໝັກ ເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ ສູ່ຄວາມສຳເລັດກັບພວກເຮົາ

## 2. ວິຊາການ ວິສະວະກອນ AI (AI Engineer Officer) ສູນໄອທີ

### ໜ້າທີ່ຮັບຜິດຊອບຫຼັກ

1. ອອກແບບ ແລະ ພັດທະນາ AI Models, Machine Learning ແລະ Deep Learning;
2. ອອກແບບໂຄງສ້າງ ແລະ ຂັ້ນຕອນການເຮັດວຽກຂອງ AI;
3. ກະກຽມ ແລະ ລວບລວມຂໍ້ມູນໃຫ້ມີຄວາມພ້ອມໃນນຳເຂົ້າ Models;
4. ທົດສອບວຽກ Model Training ແລະ ປະເມີນການເຮັດວຽກ;
5. ຄຸ້ມຄອງ ແລະ ພັດທະນາ Model ເພື່ອຕອບສະໜອງການເຮັດວຽກຕົວຈິງຂອງ ທຄຕລ;
6. ສຶກສາ ແລະ ທົດລອງເທັກໂນໂລຊີໃໝ່ໆ, Models ແລະ Frameworks ສຳລັບການພັດທະນາ AI ໃນຂົງເຂດວຽກງານທະນາຄານ;
7. ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

### ມາດຖານ ແລະ ເງື່ອນໄຂຂອງຜູ້ສະໝັກ

1. ເພດ: **ຊາຍ/ຍິງ**, ອາຍຸ **21- 35** ປີ (ເກີດລະຫວ່າງປີ **1991 ຫາ 2005**);
2. ລະດັບການສຶກສາ: **ຮຽນຈົບຊັ້ນສູງຂຶ້ນໄປ** ໃນສາຂາວິສະວະກຳຄອມພິວເຕີ, ວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ, ການພັດທະນາໂປຼແກຼມຄອມພິວເຕີ, ການພັດທະນາເວັບໄຊ ແລະ ສາຂາອື່ນໆທີ່ກ່ຽວຂ້ອງກັບໄອທີ;
3. ຄະແນນສະເລ່ຍຮຽນຈົບພາຍປະເທດ **CGPA 2,70/4,00 ຫຼື 6,75/10** ຂຶ້ນໄປ ຫຼື ທຽບເທົ່າ, ຄະແນນສະເລ່ຍຮຽນຈົບຕ່າງປະເທດ **CGPA 2,50/4,00 ຫຼື 6/10** ຂຶ້ນໄປ ຫຼື ທຽບເທົ່າ;
4. ມີຄວາມຮູ້ໃນດ້ານ AI, Machine Learning, Deep Learning ແລະ NLP;
5. ມີປະສົບການໃນການນຳໃຊ້ Frameworks ເຊັ່ນ: TensorFlow, PyTorch, Hugging Face, LangChain ເປັນຕົ້ນ;
6. ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ ຄ່ອງແຄ້ວ).



# ຮັບສະໝັກ
## ເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ ສູ່ຄວາມສຳເລັດກັບພວກເຮົາ

### 3. ວິຊາການ ຄຸ້ມຄອງຄວາມປອດໄພທາງໄຊເບີ (Cybersecurity Officer) ສູນໄອທີ

**ໜ້າທີ່ຮັບຜິດຊອບຫຼັກ**

1. ຄຸ້ມຄອງລະບົບການຮັກສາຄວາມປອດໄພເຄືອຄ່າຍ ແລະ ອຸປະກອນເຄືອຂ່າຍ ເຊັ່ນ: Firewall, IPS/IDS ແລະ Switch/Router ປັບປຸງການຕັ້ງຄ່າໃຫ້ມີຄວາມປອດໄພສູງ;
2. ຄຸ້ມຄອງລະບົບ SIEM ແລະ ລະບົບ SOAR ເຝົ້າລະວັງ ແລະ ກວດສອບຄວາມຜິດປົກກະຕິຂອງລະບົບ;
3. ສ້າງຄູ່ມື ແລະ ການຈັດການກັບເຫດການໄຊເບີ (Cyber Attacks) ທີ່ເກີດຂຶ້ນໃນອົງກອນເຊັ່ນ: Malware, DDoS, Data Breach ຫຼື Ransomware, ຂຽນລາຍງານສະຫຼຸບເຫດການ ແລະ ແນວທາງປ້ອງກັນ;
4. ຄຸ້ມຄອງວຽກງານຕ່າງໆທີ່ຕິດພັນກັບຂະແໜງເຊັ່ນ: ລະບົບ Email server, VPN, SSL Certificate ແລະ ລະບົບການເຊື່ອມຕໍ່ກັບພວກສ່ວນພາຍນອກ;
5. ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

**ມາດຖານ ແລະ ເງື່ອນໄຂຂອງຜູ້ສະໝັກ**

1. ເພດ: **ຊາຍ/ຍິງ**, ອາຍຸ **21- 35** ປີ (ເກີດລະຫວ່າງປີ **1991** ຫາ **2005**);
2. ລະດັບການສຶກສາ: **ຮຽນຈົບຊັ້ນສູງຂຶ້ນໄປ** ໃນສາຂາວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ, ການພັດທະນາໂປຼແກຼມຄອມພິວເຕີ, ການພັດທະນາເວັບໄຊ, ວິສະວະກຳຄອມພິວເຕີ ແລະ ສາຂາອື່ນໆທີ່ກ່ຽວຂ້ອງກັບໄອທີ;
3. ຄະແນນສະເລ່ຍຮຽນຈົບພາຍປະເທດ **CGPA 2,70/4,00 ຫຼື 6,75/10** ຂຶ້ນໄປ ຫຼື ທຽບເທົ່າ, ຄະແນນສະເລ່ຍຮຽນຈົບຕ່າງປະເທດ **CGPA 2,50/4,00 ຫຼື 6/10** ຂຶ້ນໄປ ຫຼື ທຽບເທົ່າ;
4. ມີຄວາມຮູ້ດ້ານລະບົບເຄືອຂ່າຍ: TCP/IP, DNS, VPN, Firewall, Router/Switch;
5. ມີປະສົບການໃນຫຼັກການ CIA Triad , ການເຂົ້າລະຫັດ, ການຄຸ້ມຄອງການເຂົ້າເຖິງ, ປະເພດໄພຄຸກຄາມ (Malware, Phishing, Ransomware, DDoS, Social Engineering);
6. ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ).



# ຮັບສະໝັກ

## ເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ ສູ່ຄວາມສຳເລັດກັບພວກເຮົາ

### 4. ວິຊາການ ວິສະວະກອນໄຟຟ້າ (Electrical Engineer Officer) ສູນໄອທີ

**ໜ້າທີ່ຮັບຜິດຊອບຫຼັກ**

1. ຮັບຜິດຊອບຄຸ້ມຄອງໝໍ້ແປງໄຟຟ້າ, ຈັກປັ່ນໄຟຟ້າ ແລະ ເຄື່ອງເກັບໄຟຟ້າສຳຮອງ;
2. ຄຸ້ມຄອງລະບົບແອເຢັນຂອງຫ້ອງ Data Center;
3. ຕິດຕາມການຕິດຕັ້ງລະບົບໄຟຟ້າ ແລະ ລະບົບເຕັກນິກຕ່າງໆຂອງໂຄງການ Data Center ທຄຕລ;
4. ຕິດຕາມ ແລະ ແກ້ໄຂບັນຫາລະບົບປັກສຽບໄຟຟ້າ (Load) ສຳລັບເຄື່ອງ Server, Network, ຄອມພິວເຕີ, ຕູ້ ATM-CDM, ໄຟແສງສະຫວ່າງ ແລະ ອື່ນໆ;
5. ໃຫ້ຄວາມຊ່ວຍເຫຼືອ, ຕິດຕັ້ງລະບົບໄຟຟ້າ, ລະບົບເຄື່ອງສຽງຫ້ອງປະຊຸມທັງໃນ ແລະ ນອກສະຖານທີ່;
6. ຄຸ້ມຄອງລະບົບໂທລະສັບຕັ້ງໂຕະ, ລະບົບຕິດຕາມອຸນຫະພູມ-ຄວາມຊຸ່ມ ແລະ ລະບົບຄຸ້ມຄອງອາຄານທັນສະໄໝ;
7. ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

**ມາດຖານ ແລະ ເງື່ອນໄຂຂອງຜູ້ສະໝັກ**

1. ເພດ: **ຊາຍ/ຍິງ**, ອາຍຸ **21- 35** ປີ (ເກີດລະຫວ່າງປີ **1991** ຫາ **2005**);
2. ລະດັບການສຶກສາ: **ຮຽນຈົບຊັ້ນສູງຂຶ້ນໄປ** ໃນສາຂາວິສະວະກຳໄຟຟ້າ, ເອເລັກໂຕຼນິກ ແລະ ສາຂາອື່ນໆທີ່ກ່ຽວຂ້ອງກັບລະບົບໄຟຟ້າ;
3. ຄະແນນສະເລ່ຍຮຽນຈົບພາຍປະເທດ **CGPA 2,70/4,00 ຫຼື 6,75/10** ຂຶ້ນໄປ ຫຼື ທຽບເທົ່າ, ຄະແນນສະເລ່ຍຮຽນຈົບຕ່າງປະເທດ **CGPA 2,50/4,00 ຫຼື 6/10** ຂຶ້ນໄປ ຫຼື ທຽບເທົ່າ;
4. ມີຄວາມຮູ້ດ້ານອຸປະກອນ ແລະ ລະບົບໄຟຟ້າເຊັ່ນ: ຄຸ້ມຄອງໝໍ້ແປງ-ຈັກປັ່ນໄຟຟ້າ, ລະບົບແອເຢັນ, ຕິດຕັ້ງລະບົບໄຟຟ້າ, ຕິດຕາມແກ້ໄຂບັນຫາລະບົບໄຟຟ້າຕ່າງໆ ເປັນຕົ້ນ;
5. ມີປະສົບການໃນການຄຸ້ມຄອງອຸປະກອນ, ລະບົບໄຟຟ້າໃນອາຄານ ຍິ່ງເປັນການດີ;
6. ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ).



# ຮັບສະໝັກ ເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ ສູ່ຄວາມສຳເລັດກັບພວກເຮົາ

## 5. ວິຊາການ ພັດທະນາໂປຼແກຼມ (Programmer Officer) ສູນບໍລິການອີເລັກໂຕຣນິກ ແລະ ຜະລິດຕະພັນບັດ

### ໜ້າທີ່ຮັບຜິດຊອບຫຼັກ

1. ພັດທະນາ, ກວດສອບຄວາມປອດໄພ, ແກ້ໄຂບັນຫາ ລະບົບຮອງຮັບການສ້າງຜະລິດຕະພັນ ແລະ ການບໍລິການໃໝ່ໆຂອງ ທຄຕລ;
2. ພັດທະນາ ແລະ ປັບປຸງລະບົບທີ່ມີຢູ່ແລ້ວໃຫ້ດີຂຶ້ນເຊັ່ນ: BCEL One, SmartVAT, SmartTax, BCOME ເປັນຕົ້ນ;
3. ພັດທະນາເຄື່ອງມືອຳນວຍຄວາມສະດວກໃຫ້ແກ່ພະນັກງານພາຍໃນສູນ ແລະ ພາຍໃນ ທຄຕລ;
4. ກວດສອບ ແລະ ທົດລອງຜະລິດຕະພັນກ່ອນຈະມີການເປີດການນຳໃຊ້;
5. ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

### ມາດຖານ ແລະ ເງື່ອນໄຂຂອງຜູ້ສະໝັກ

1. ເພດ: **ຊາຍ/ຍິງ**, ອາຍຸ **21- 35** ປີ (ເກີດລະຫວ່າງປີ **1991 ຫາ 2005**);
2. ລະດັບການສຶກສາ: **ຮຽນຈົບຊັ້ນສູງຂຶ້ນໄປ** ໃນສາຂາວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ, ການພັດທະນາໂປຼແກຼມຄອມພິວເຕີ, ການພັດທະນາເວັບໄຊ, ວິສະວະກຳຄອມພິວເຕີ ແລະ ສາຂາອື່ນໆທີ່ກ່ຽວຂ້ອງກັບໄອທີ;
3. ຄະແນນສະເລ່ຍຮຽນຈົບພາຍປະເທດ **CGPA 2,70/4,00 ຫຼື 6,75/10** ຂຶ້ນໄປ ຫຼື ທຽບເທົ່າ, ຄະແນນສະເລ່ຍຮຽນຈົບຕ່າງປະເທດ **CGPA 2,50/4,00 ຫຼື 6/10** ຂຶ້ນໄປ ຫຼື ທຽບເທົ່າ;
4. ມີຄວາມຮູ້ໃນພາສາໂປຼແກມໃດໜຶ່ງເຊັ່ນ: Java, JavaScript, Vue.js, Svelte, Python, Go, Rust;
5. ຮູ້ນຳໃຊ້ຖານຂໍ້ມູນໃດໜຶ່ງເຊັ່ນ: Oracle, MariaDB, MySQL, PostgreSQL;
6. ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ).



# ຮັບສະໝັກ
## ເພື່ອນຮ່ວມງານ
ຮ່ວມເປັນສ່ວນໜຶ່ງ ສູ່ຄວາມສຳເລັດກັບພວກເຮົາ

### 6. ວິຊາການ ເຕັກນິກຕູ້ເງິນຝາກ ແລະ ຕູ້ຄີອອສ (Technician CRM and KIOSK Officer) ສູນບໍລິການອີເລັກໂທຼນິກ ແລະ ຜະລິດຕະພັນບັດ

#### ໜ້າທີ່ຮັບຜິດຊອບຫຼັກ

1. ຕິດຕັ້ງ, ສ້ອມແປງ ແລະ ບຳລຸງຮັກສາຕູ້ CDM, CRM, ຕູ້ແລກປ່ຽນເງິນ ແລະ Kiosk ໃຫ້ພ້ອມໃຊ້ງານຕະຫຼອດເວລາ;
2. ວິເຄາະ ແລະ ແກ້ໄຂບັນຫາດ້ານ Hardware, Software ແລະ Network ຂອງບັນດາອຸປະກອນ.
3. ຕິດຕັ້ງ, ອັບເດດ, ທົດສອບລະບົບ ແລະ ອຸປະກອນໃໝ່ໆ;
4. ຊ່ວຍເຫຼືອ, ປະສານງານກັບບັນດາສາຂາ, ຜູ້ໃຫ້ບໍລິການ (Vendor) ແລະ ພາກສ່ວນທີ່ກ່ຽວຂ້ອງ.
5. ຮັບຜິດຊອບເຮັດລາຍງານ ແລະ ຕິດຕາມປະສິດທິພາບການໃຫ້ບໍລິການຂອງບັນດາຕູ້ຕ່າງໆ.
6. ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

#### ມາດຖານ ແລະ ເງື່ອນໄຂຂອງຜູ້ສະໝັກ

1. ເພດ: **ຊາຍ/ຍິງ**, ອາຍຸ **21- 35** ປີ (ເກີດລະຫວ່າງປີ **1991 ຫາ 2005**);
2. ລະດັບການສຶກສາ: **ຮຽນຈົບຊັ້ນສູງຂຶ້ນໄປ** ໃນສາຂາວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ, ການພັດທະນາໂປຼແກຼມຄອມພິວເຕີ, ການພັດທະນາເວັບໄຊ, ວິສະວະກຳຄອມພິວເຕີ ແລະ ສາຂາອື່ນໆທີ່ກ່ຽວຂ້ອງກັບໄອທີ;
3. ຄະແນນສະເລ່ຍຮຽນຈົບພາຍປະເທດ CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ, ຄະແນນສະເລ່ຍຮຽນຈົບຕ່າງປະເທດ CGPA 2,50/4,00 ຫຼື 6/10 ຂຶ້ນໄປ ຫຼື ທຽບເທົ່າ;
4. ມີຄວາມຮູ້ໃນສ້ອມແປງຄອມພິວເຕີ, ເນັດເວີກ, ຕິດຕັ້ງລະບົບໄຟຟ້າ ແລະ ການນຳໃຊ້ຄອມພິວເຕີເປັນຢ່າງດີ;
5. ມີຄວາມປະສົບການກ່ຽວກັບ ATM/CDM, Kiosk ຫຼື ລະບົບ Self-Service Banking ຍິ່ງເປັນການດີ;
6. ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ).



# ຮັບສະໝັກ ເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ ສູ່ຄວາມສຳເລັດກັບພວກເຮົາ

## 7. ວິຊາການ ວິສະວະກຳ ແລະ ວິທະຍາສາດຂໍ້ມູນ (Data Engineer & Science Officer) ພະແນກ ຄົ້ນຄວ້າ ແລະ ພັດທະນາ

### ໜ້າທີ່ຮັບຜິດຊອບຫຼັກ

1. ຄົ້ນຄວ້າ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງກຳນົດໂຄງສ້າງຂໍ້ມູນທີ່ສຳຄັນ (Critical Data Element -CDEs), ການອອກແບບຈັດແບ່ງກຸ່ມຂໍ້ມູນ, ການສ້າງ (Data Taxonomy) ແລະ ພັດທະນາສູນກາງຂໍ້ມູນຕ່າງໆ (Metadata) ເປັນຕົ້ນ;
2. ຄົ້ນຄວ້າເຄື່ອງມືໂອນຖ່າຍຂໍ້ມູນ, ລວມສູນ ແລະ ສອນການນຳໃຊ້ໃຫ້ທີມງານ (Data Engineering);
3. ອອກແບບ ແລະ ສ້າງຕາຕະລາງເກັບຂໍ້ມູນກາງຂອງ ທຄຕລ ພ້ອມທັງຈັດກຸ່ມຂໍ້ມູນ (ຂໍ້ມູນຜະລິດຕະພັນ, ການບໍລິການ, ຂໍ້ມູນລູກຄ້າ ແລະ ອື່ນໆ);
4. ຄົ້ນຄວ້າເຄື່ອງມື ແລະ ການນຳໃຊ້ ໃນລະບົບ BCEL Big data ຂອງ ທຄຕລ;
5. ກວດກາ, ຕິດຕາມ ແລະ ແກ້ໄຂບັນຫາຂໍ້ມູນໃນລະບົບຖານຂໍ້ມູນກາງ (Cleansing data) ແລະ ຄວບຄຸມຄຸນນະພາບ;
6. ອອກແບບ ແລະ ພັດທະນາລາຍງານສະຖິຕິຜ່ານ Platform ຕ່າງໆທີ່ ທຄຕລ ນຳໃຊ້ໃນແຕ່ລະໄລຍະ;
7. ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

### ມາດຖານ ແລະ ເງື່ອນໄຂຂອງຜູ້ສະໝັກ

1. ເພດ: **ຊາຍ/ຍິງ**, ອາຍຸ **21- 35** ປີ (ເກີດລະຫວ່າງປີ **1991** ຫາ **2005**);
2. ລະດັບການສຶກສາ: **ຮຽນຈົບຊັ້ນສູງຂຶ້ນໄປ** ໃນສາຂາວິທະຍາສາດຂໍ້ມູນ, ວິສະວະກຳຄອມພິວເຕີ , ວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ, ແລະ ສາຂາອື່ນໆທີ່ກ່ຽວຂ້ອງກັບວິສະວະກຳ ແລະ ວິທະຍາສາດ ຂໍ້ມູນ;
3. ຄະແນນສະເລ່ຍຮຽນຈົບພາຍປະເທດ **CGPA 2,70/4,00 ຫຼື 6,75/10** ຂຶ້ນໄປ ຫຼື ທຽບເທົ່າ, ຄະແນນສະເລ່ຍຮຽນຈົບຕ່າງປະເທດ **CGPA 2,50/4,00 ຫຼື 6/10** ຂຶ້ນໄປ ຫຼື ທຽບເທົ່າ;
4. ມີທັກສະບໍລິຫານຈັດການຂໍ້ມູນຂະໜາດໃຫຍ່ໃນລະບົບ SeaweedFS, MinIO, S3, Hadoop, Docker, K8S ເປັນຕົ້ນ;
5. ມີທັກສະດ້ານວິທະຍາສາດຂໍ້ມູນ (Data Science: Machine Learning, Deep Learning ແລະ LLM & AI) ເປັນຕົ້ນ;
6. ມີຄວາມຮູ້ພາສາ Python, Scala (Big data Analytic), ສາມາດນຳໃຊ້ Apache Spark, Trino, Apache Doris ຫຼື StarRocks ສາມາດນຳໃຊ້ SQL ແລະ Apache Presto ຂັ້ນສູງ;
7. ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ).



# ຮັບສະໝັກ
## ເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ ສູ່ຄວາມສຳເລັດກັບພວກເຮົາ

**ວິທີສະໝັກວຽກ:**

**ການສະໝັກແມ່ນອອນລາຍຜ່ານເວັບໄຊ ຂອງ ທຄຕລ ເທົ່ານັ້ນ, ຜູ້ທີ່ມີເງື່ອນໄຂຄົບຖ້ວນຕາມການປະກາດ ແລະ ມີຄວາມສົນໃຈທີ່ຈະສະໝັກວຽກ ແມ່ນໃຫ້ອ່ານລາຍລະອຽດຂອງແຕ່ລະຕຳແໜ່ງງານ ແລະ ປະຕິບັດຕາມຂັ້ນຕອນລຸ່ມນີ້:**

1. **ເຂົ້າໄປປະກອບແບບຟອມສະໝັກ** ທາງອອນລາຍໄດ້ທີ່ ເວັບໄຊຂອງ ທຄຕລ **www.bcel.com.la**

➢ **ສະໝັກວຽກ > ສະໝັກວຽກກັບ BCEL > ເລືອກຕຳແໜ່ງທີ່ຕົນເອງຕ້ອງການສະໝັກ> ຈາກນັ້ນປະກອບຂໍ້ມູນຂອງຕົນລົງແບບຟອມ.**

- ສຳລັບການປະກອບຂໍ້ມູນຂອງຜູ້ສະໝັກລົງໃນແບບຟອມ ຕ້ອງລະບຸທຸກຂໍ້ມູນໃຫ້ຄົບຖ້ວນຕາມແບບຟອມກຳນົດ ໂດຍສະເພາະອີເມວ ແລະ ເບີໂທ ຕ້ອງເປັນອີເມວ ແລະ ເບີໂທທີ່ນຳໃຊ້ປະຈຸບັນ ແລະ ເປີດນຳໃຊ້ປົກກະຕິ.

- **ເອກະສານທີ່ມີຄວາມຈຳເປັນໃນເບື້ອງຕົ້ນ ທີ່ຕ້ອງປະກອບລົງໃນແບບຟອມສະໝັກອອນລາຍມີ:**
**(ເອກະສານຕ້ອງເປັນຮູບແບບຟາຍ PDF ຫຼື JPG)**

✓ ເອກະສານຢັ້ງຢືນຕົວຕົນ (ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື Passport) ຢ່າງໃດຢ່າງໜຶ່ງ ທີ່ຍັງບໍ່ໝົດອາຍຸນຳໃຊ້
✓ ໃບປະກາດວິຊາສະເພາະ ແລະ ໃບຄະແນນ
✓ ສຳລັບ **"ຜູ້ທີ່ສຳເລັດການສຶກສາແລ້ວ ແຕ່ຍັງບໍ່ໄດ້ຮັບໃບປະກາດ (ລໍຖ້າຮັບໃບປະກາດ)"** ແມ່ນສາມາດສະໝັກໄດ້ ໂດຍນຳໃຊ້ ໃບຢັ້ງຢືນສຳເລັດການສຶກສາ (ໂດຍມີການລະບຸວ່າ ໄດ້ສຳເລັດການປ້ອງກັນບົດ ຫຼື ສອບເສັງຈົບຊັ້ນແລ້ວ) ພ້ອມດ້ວຍ ໃບຄະແນນ **ທີ່ບໍ່ແມ່ນໃບຢັ້ງຢືນການເປັນນັກສຶກສາ**
✓ ໃບຢັ້ງຢືນການເຂົ້າຮ່ວມການຝຶກອົບຮົມຕ່າງໆ ທີ່ເຫັນວ່າກ່ຽວຂ້ອງກັບໜ້າວຽກ (ຖ້າມີ)
✓ ໃບຢັ້ງຢືນລະດັບພາສາຕ່າງປະເທດໃດໜຶ່ງ ເຊັ່ນ: ພາສາອັງກິດ, ພາສາຈີນ ຫຼື ພາສາຫວຽດນາມ ແລະ ອື່ນໆ (ຖ້າມີ)

**- ສ່ວນເອກະສານອື່ນໆ ທີ່ບໍ່ໄດ້ລະບຸ ແມ່ນບໍ່ຈຳເປັນຕ້ອງອັບໂຫຼດລົງແບບຟອມ** ຊຶ່ງຜູ້ສະໝັກຈະໄດ້ປະກອບມາພາຍຫຼັງສອບເສັງ ແລະ ຖືກຄັດເລືອກເຂົ້າເປັນພະນັກງານແລ້ວ.

2. **ຜູ້ສະໝັກທີ່ໄດ້ປະກອບຂໍ້ມູນຕ່າງໆ**ໃນແບບຟອມສະໝັກທາງອອນລາຍ ສຳເລັດ ແລະ ຄົບຖ້ວນ **ຈະໄດ້ຮັບອີເມວ ຫຼື WhatsApp 020 59591105 ແຈ້ງລະຫັດ** ຈາກ ທຄຕລ ແຕ່ຖ້າບໍ່ໄດ້ຮັບການແຈ້ງລະຫັດຈາກ ທຄຕລ ແມ່ນໝາຍເຖິງສະໝັກບໍ່ສຳເລັດ ຫຼື ລະບົບມີການ Reject ອັດຕະໂນມັດ ຊຶ່ງສາມາດຕິດຕໍ່ສອບຖາມເພີ່ມຕື່ມໄດ້ກັບພະແນກຈັດຕັ້ງ-ພະນັກງານ ຕາມລາຍລະອຽດຂໍ້ທີ 7.
3. **ຜູ້ສະໝັກ 01 ຄົນ ສາມາດສະໝັກໄດ້ 01 ຕຳແໜ່ງ ເທົ່ານັ້ນ,** ຫາກພົບເຫັນລາຍຊື່ຢູ່ໃນຫຼາຍຕຳແໜ່ງ ທຄຕລ ຂໍສະຫງວນສິດເລືອກຕຳແໜ່ງທີ່ຜູ້ສະໝັກໄດ້ສົ່ງຟອມອອນລາຍເປັນອັນທຳອິດ ແລະ ເໝາະສົມ ອີງຕາມວັນເວລາທີ່ໄດ້ປະກອບຟອມອອນລາຍ.
4. **ຜູ້ສະໝັກຈະຕ້ອງເອົາໃຈໃສ່ໃນການບັນທຶກ ຫຼື ຈື່ຈຳ** ລະຫັດຂອງຕົນເອງຢ່າງລະອຽດ ເນື່ອງຈາກ ທຄຕລ ຈະແຈ້ງຂໍ້ມູນຜູ້ສະໝັກທີ່ຜ່ານການຄັດເລືອກໃຫ້ເຂົ້າສອບເສັງ ເປັນລະຫັດປະຈຳຕົວຂອງນັກສອບເສັງເທົ່ານັ້ນ (ຈະບໍ່ໄດ້ແຈ້ງຊື່ ແລະ ນາມສະກຸນນັກສອບເສັງ).
5. **ກຳນົດເວລາໃນການເປີດ-ປິດຮັບສະໝັກ:**

- ເປີດຮັບສະໝັກ **ອອນລາຍ ຜ່ານທາງເວັບໄຊ ທຄຕລ** ນັບວັນທີ **08/07/2026-19/07/2026 ປິດຮັບສະໝັກ**
- ສຳລັບຜູ້ທີ່ຜ່ານ ຫຼື ບໍ່ຜ່ານເງື່ອນໄຂ ເພື່ອເຂົ້າຮອບສອບເສັງ ຫຼື ສຳພາດ ທາງ ທຄຕລ ຈະແຈ້ງໃຫ້ຊາບຜ່ານອີເມວ ທີ່ຜູ້ສະໝັກໄດ້ໃຊ້ໃນການສະໝັກອອນລາຍ ແລະ ຈະແຈ້ງວັນເວລາ, ສະຖານທີ່ສອບເສັງຕື່ມຕາມພາຍຫຼັງ (ແຈ້ງເປັນລະຫັດທີ່ຜູ້ສະໝັກໄດ້ຮັບ).

6. **ຜູ້ສະໝັກຄົນໃດທີ່ໄດ້ປອມແປງ**ເອກະສານເພື່ອການສະໝັກ, ຫາກສືບຮູ້ພາຍຫຼັງວ່າໄດ້ມີການໃຫ້ຂໍ້ມູນທີ່ບໍ່ເປັນຄວາມຈິງແມ່ນຈະຖືກຕັດສິດບໍ່ໄດ້ຮັບການພິຈາລະນາເປັນພະນັກງານຂອງ ທຄຕລ ແລະ ຖືກດຳເນີນຄະດີຕາມກົດໝາຍ.
7. **ລາຍລະອຽດເພີ່ມເຕີມ** ສາມາດສອບຖາມໄດ້ທີ່ ພະແນກຈັດຕັ້ງ-ພະນັກງານ ໂທ: **021 213200-417 ຫຼື 418.**

**ຜູ້ທີ່ຜ່ານການຄັດຟອມໃນເບື້ອງຕົ້ນທາງ ທຄຕລ ຈະຕິດຕໍ່ກັບ**